# ບົດທີ 2

# ການແຜ່ຂະຫຍາຍອອກໄປຂອງອານາຈັກ




ແຂວງຄາລີເລເປັນແຂວງນ້ອຍຄື: ຄວາມຍາວພຽງ100 ຫຼັກ ກວ້າງ 50 ຫຼັກແຕ່ວ່າດິນໃນແຂວງນັ້ນ ອຸດົມສົມບູນຫຼາຍຄົນກໍ່ມີຫຼາຍດ້ວຍ ມີບ້ານມີເມືອງຫຼາຍເປັນຕົ້ນໃນເຂດທີ່ມີທົນທາງຜ່ານໄປປະເທດຕ່າງໆ. ສູນກາງຂອງການເດີນທາງນັ້ນຢູ່ພາກຕາເວັນອອກຂ້າງທະເລສາບ ແຄມທະເລນັ້ນມີບ້ານຄົນຫຼາຍ ມີທົ່ງນາມີຜົນລະປູກມີຜັກເຂົ້າປາອາຫານກໍບໍ່ຂາດຄົນຫາປາກໍ່ຫຼາຍ ຄົນເດີນທາງໄປໆ ມາໆ ກໍ່ມີຢູ່ສະເໝີ

*ນັ້ນແຫຼະ ແຂວງຄາລີເລ!*

**1** ໃນບົດກ່ອນນີ້ເຮົາໄດ້ແຍກ " ສະໄໝປີທີ່ ພະເຍຊູ ຊື່ສຽງດີ " ມາເປັນ 6 ພາກເພື່ອຈະຮຽນຄືນອີກຂໍໃຫ້ທ່ານຂຽນ ບົດພະຄຳພີໃນແບບແຜນນີ້.

| ສ່ວນໃນອານາຈັກ | ຫົວເລື່ອງ | ບົດ ແລະ ຂໍ້ ຄຳພີ |
|---|---|---|
| ກ. ການຂະຫຍາຍໄປຂອງອານາຈັກ | ພະເຍຊູ ຊົງຕັ້ງຕົ້ນປ່າວປະກາດໃນຄາລີເລ | |
| ຂ. ກົດໝາຍຂອງອານາຈັກ. | ພະເຍຊູຊົງຕັ້ງຕົ້ນເທດສະຢູ່ຈ້າຍພູ | |
| ຄ. ຫຼັກຖານຂອງອານາຈັກ. | ພະອົງກະທຳການອັດສະຈັນ | |
| ງ. ຜູ້ຕາງໜ້າຂອງອານາຈັກ. | ຊົງເອີ້ນເອົາສາວົກສິບສອງຄົນ | |
| ຈ. ສັດຕູຂອງອານາຈັກ. | ມີຜູ້ມາຕໍ່ສູ້ | |
| ສ. ຕົວຢ່າງຂອງອານາຈັກ. | ພະອົງຍົກຄຳອຸປະມາ | |

**2** ດຽວນີ້ເຮົາຈະເອົາ " ສະໄໝພະອົງຊື່ສຽງດີ " ມາຮຽນເພາະເຮົາໄດ້ແຍກເປັນແຕ່ລະສ່ວນແລ້ວ ເຮົາຈະຮຽນສ່ວນ ໃດໃນອານາຈັກກ່ອນ? ________________________________
ຫົວເລື່ອງໃດ? ____________________________________________________
ບົດແລະຂໍ້ໃດ? ___________________________________________________

**3** ຂໍໃຫ້ທ່ານອ່ານຈາກ ມທ 4:12-25 ເຫັນຄຳວ່າ "ຄາລີເລ" ຈັກເທື່ອ? _______________
ເພາະເຫດນີ້ບາງຄົນເອີ້ນ "ສະໄໝຊື່ສຽງດີຂອງ ພະເຍຊູ "ວ່າເປັນ" ສະໄໝທີ່ພະອົງປ່າວປະກາດໃນແຂວງ "____________________________" ກໍ່ໄດ້. (ຈົ່ງຕື່ມຄວາມທີ່ຂາດ)

**4** ຖ້າເຮົາຈະຮຽນຮູ້ກ່ຽວກັບແຂວງຄາລີເລຍິ່ງຫຼາຍຍິ່ງດີ ເພື່ອເຮົາຈະເຂົ້າໃຈສະຖານະການທີ່ ພະເຍຊູ ປະກາດນັ້ນ. ຂໍໃຫ້ທ່ານກັບໄປເບິ່ງແຜນທີ່ໜ້າປົກບົດນີ້ອີກ ທ່ານສັງເກດຈະເຫັນວ່າມີ ຕົວອັກສອນເປັນບ່ອນແຕ່ລະບ່ອນຕົວອັກສອນນັ້ນມີ ຄວາມໝາຍຈຳເພາະໃຫ້ທ່ານສຳຫຼວດ ດີໆແລ້ວຂຽນຕົວອັກສອນໄວ້ໃຫ້ຖືກກັບສະຖານທີ່ຂ້າງລຸ່ມນີ້:

1. ________ ຫົນທາງໄປຕ່າງປະເທດ.
2. ________ ການຫາປາ.
3. ________ໝາກໄມ້ຕ່າງໆ.
4. ________ ເຂົ້າບະເລ.
5. ________ ບ້ານແລະເມືອງ.
6. ________ ຂະໜາດຍາວແລະກວ້າງ.
7. ________ ເຮືອເດີນທະເລ.
8. ________ ການລ້ຽງແກະ.

**5** ໃຫ້ທ່ານໝາຍ √ ໃສ່ຂໍ້ໃດທີ່ຖືກກັບແຂວງຄາລີເລ.

ກ. _______ ແຂວງຄາລີເລເປັນທະເລຊາຍສ່ວນຫຼາຍ.

ຂ. _______ ພວກໂລມສ້າງຫົນທາງຫຼາຍເສັ້ນໃນແຂວງຄາລີເລ.

ຄ. ________ ແຂວງນັ້ນມີຜົນຜະລິດຫຼາຍຄື: ເຂົ້າບະເລໝາກໄມ້ ແລະ ປາ ເຫຼົ່ານີ້ເປັນຕົ້ນ.
ງ. ________ ຄາລິເລເປັນແຂວງທີ່ໃຫຍ່ຫຼາຍ.
ຈ. ________ ມີຂະໜາດຍາວປະມານ 100 ຫຼັກ ກວ້າງ 50 ຫຼັກ.
ສ. ________ ເຮໂລດຜູ້ປົກຄອງເມືອງເປັນກະສັດເຂົາ.
ຊ. ________ ມີປະຊາຊົນຫຼາຍ.
ຍ. ________ ອາເຄລາວເປັນກະສັດເຂົາ.
ດ. ________ ມີຫຼາຍຄົນຢູ່ແຄມທະເລ.
ຕ. ________ ແຂວງນັ້ນປ່ຽວຫຼາຍບໍ່ມີຄົນທ່ຽວໄປມາຫຼາຍປານໃດ.
ຖ. ________ ເພາະເຫດວ່າແຂວງນີ້ນ້ອຍຫຼາຍ ພະເຢຊູ ຈະສາມາດໄປທົ່ວແຂວງນັ້ນໄດ້.

**6** ແຂວງຄາລິເລເປັນບ່ອນສຳຄັນຫຼາຍໃນການປະກາດຂອງ ພະເຢຊູ
ກ. ພະເຢຊູປ່າວປະກາດເລື່ອງຫຍັງໃນແຂວງຄາລິເລ(ອ່ານ ມທ 4:17)? ______________
ຂ. ໃນທຸກເມືອງທີ່ ພະເຢຊູ ໄປພະອົງຈະຊອກຫາບ່ອນໃດເທດສະໜາ? (ອ່ານ ມທ 4:23)

________________________________________________________________

**7** ໃນປີກ່ອນນັ້ນ ໂຢຮັນບັບຕິສະໂຕ ປ່າວປະກາດກ່ຽວກັບ ອານາຈັກສະຫວັນເໝືອນກັນແຕ່ໃນສະໄໝ ປີທີ່ຊີ້ສຽງດີຂອງ ພະເຢຊູ ເພິ່ນຢູ່ໃສ? (ອ່ານ ມັດທາຍ 4:12) ________________

**8** ພະເຢຊູຍ້າຍໄປຢູ່ເມືອງໃດເພື່ອປ່າວປະກາດ? (ອ່ານ ມທ 4:13) __________________

**9** ກ. ຈາກເຂດນັ້ນພະອົງຈະເຫັນຄົນຈາກຕ່າງປະເທດເດີນທາງໄປມາເພາະມີຫຍັງ?

________________________________________________________________

ຂ. ປະຊາຊົນໃນແຂວງຄາລິເລ ມີຈຳນວນຫຼາຍ ຫຼື ນ້ອຍ? ________________________
ຄ. ຂະໜາດພື້ນທີ່ກວ້າງ ຍາວເທົ່າໃດ? ____________________________________
ງ. ຜົນຜະລິດຂອງແຂວງຄາລິເລມີຫຍັງແດ່? _________________________________

**10** ໃຫ້ທ່ານອ່ານ ມທ 4:23 ອີກ ພະເຢຊູ ໃຊ້ວິທີໃດແດ່ ໃນການປ່າວປະກາດ?
ໃຫ້ໝາຍເອົາຂໍ້ທີ່ຖືກ.

ກ. ຄຳສັ່ງສອນ.
ຂ. ຫຼິ້ນການເມືອງ.
ຄ. ໃຊ້ຄວາມຮຸນແຮງ.
ງ. ການອັດສະຈັນ.
ຈ. ຮ່ວມມືກັບ ເຮໂລດ.
ສ. ຮ່ວມມືກັບພວກຈັກກະພັດໂລມ.

**11** ຂໍໃຫ້ທ່ານປຽບມທ 4:23 ກັບ ມທ 9:35 (ໃຫ້ໝາຍເອົາຂໍ້ທີ່ຖືກ)
ກ. ສອງຂໍ້ນັ້ນຄືກັນໝົດ.
ຂ. ສອງຂໍ້ນັ້ນຄ້າຍຄືກັນ.
ຄ. ສອງຂໍ້ນັ້ນຕ່າງກັນຫຼາຍ.

**12** ສອງຂໍ້ນັ້ນ (ມທ 4:23 ແລະ 9:35) ຄືກັນຫຼາຍ ໃນທັງສອງຂໍ້ນັ້ນ ພະເຢຊູປ່າວປະກາດອານາຈັກສະ ຫວັນໂດຍໃຊ້ ສອງວິທີໃດ? ________________ ແລະ ________________

| |
|---|
| ຂໍໃຫ້ທ່ານຂີດເສັ້ນອ້ອມ2ຂໍ້ນັ້ນໃນພະຄຳພີແລະຂີດເສັ້ນກ້ອງຄຳ"ອານາຈັກ " ທັງສອງຂໍ້ດ້ວຍສໍສີແດງ |

**13** ໃນຕະຫຼອດທົ່ວແຂວງຄາລີເລ ພະເຢຊູ ປ່າວປະກາດໂດຍໃຊ້ 2 ວິທີນີ້. ໃນ ມທ ບົດ 5-7 ພະອົງໃຊ້ວິທີໃດ? ________________________________________________

ແລະ ໃນ ມທ ບົດ 8 ແລະ 9 ເດ? ______________________________________

**14** ພໍດີ ພະເຢຊູຕັ້ງຕົ້ນປະກາດພະອົງເອີ້ນເອົາຈັກຄົນມາເປັນສາວົກກ່ອນ? ____________

**15** ພວກ 4 ຄົນນັ້ນປະອາຊີບຫາປາ ມາຕິດຕາມ ພະເຢຊູ ເພື່ອຫຍັງ? ໃຫ້ໝາຍເອົາຂໍ້ທີ່ຖືກ.

ກ. ເພື່ອໄດ້ເງິນເດືອນຫຼາຍກວ່າ. ຂ. ເພື່ອການບ້ານເມືອງ.

ຄ. ເພື່ອປະກາດອານາຈັກໃຫ້ຂະຫຍາຍໄປ. ງ. ເພື່ອທ່ອງທ່ຽວໄປທົ່ວແຂວງ ຄາລີເລ.

**16** ຄົນທີ່ເຄີຍຫາປາ 4 ຄົນນັ້ນຊື່ຫຍັງແດ່? (ອ່ານ ມທ 4:18-21) ____________________

**17** ແຕ່ທີ່ຈິງ ພະເຢຊູ ເຄີຍເຫັນເຂົາທັງ 4 ຄົນກ່ອນ

ກ. ເຫັນຢູ່ໃສ? __________________ ຢູ່ກັບໃຜ? ______________________

ຂ. ເຫັນເຂົາໃນສະໄໝປີໃດໃນຊີວິດ ພະເຢຊູ? ____________________________

ຄ. ແຕ່ໃນຕົ້ນປີສະໄໝພະເຢຊູຊື່ສຽງດີນີ້ ຊີວິດຂອງເຂົາປ່ຽນເພາະເຫດການໃດ?

(ອ່ານ ມທ 4:22) ____________________________________________

**18** ກ.ໃນເວລາ ພະເຢຊູ ໄປປ່າວປະກາດໃນແຂວງຄາລີເລ ເພິ່ນໃຊ້ສອງວິທີໃດໃນການ ປະກາດ?

__________________________ ແລະ ______________________________

ຂ. ມີຜູ້ໃດແດ່ໄປຮ່ວມກັບພະອົງ? ______________________________________

**19** ບາດນີ້ເຮົາຈະສຳຫຼວດເບິ່ງການປ່າວປະກາດຂອງພະອົງຈາກອີກດ້ານ ນີ້ງຕືດ້ານຜູ້ທຳນວາຍໃນພະຄຳພີເດີມ. ແຂວງຄາລີເລກໍ່ສຳຄັນໃນຄຳທຳນວາຍດ້ວຍ.

ກ. ຜູ້ທຳນວາຍໃດ ບອກວ່າ ພະເຢຊູ ຈະຢູ່ໃນແຂວງຄາລີເລ? (ອ່ານ ມທ 4:14-15)______

ຂ. ເພິ່ນໃຊ້ສັນຍາລັກໃດ ເພື່ອພັນລະນາວຽກການຂອງ ພະເຢຊູ ໃນແຂວງຄາລີເລ?

(ອ່ານ ມທ 4:16) ____________________________________________

**20** ໃນບົດ 14 ຂອງເຫຼັ້ມທີ 2 ຂອງຫຼັກສູດນີ້ທ່ານໄດ້ຮຽນເລື່ອງຄວາມທຳນວາຍ 8 ປະການກ່ຽວກັບການສະເດັດມາ ຂອງ ພະເຢຊູ. ຄຳທຳນວາຍທີ່ຫາກໍ່ສະເໜີນີ້ປາກົດຢູ່ໃນ ພະຄຳພີເດີມບົດໃດ ຂໍ້ໃດ? (ເບິ່ງໃນຂໍ້ອ້າງຢູ່ລຸ່ມໜ້າກໍ່ໄດ້) ____________________________

**21** ໃນຄຳທຳນວາຍ 7 ປະການຕໍ່ໄປນີ້ ມີປະການໃດທີ່ເຫັນໃນພະທຳ ເອຊາຢາ?

ໃຫ້ໝາຍເອົາຂໍ້ທີ່ຖືກ.

ກ. ພະອົງຈະເກີດໃນເບດເລເຮັມ.

ຂ. ຍິງພົມມະຈາລີມີທ້ອງ.

ຄ. ຊື່ວ່າເອມານູເອນ.

ງ. 70 ອາທິດ.

ຈ. ມີສຽງຜູ້ຮ້ອງວ່າ "ຈົ່ງຈັດແຈງທາງໄວ້ເພື່ອພະຜູ້ເປັນເຈົ້າ"

ສ. ພະອົງຈະປະກາດໃນແຂວງ ຄາລີເລ.

ຊ. ດວງດາວ.

*ແຕ່ວ່າ ໃນພະທຳ ເອຊາຢາ ຍັງມີຫຼາຍປະການທີ່ບໍ່ທັນໄດ້ອະທິບາຍເທື່ອຄື:*
*"ເຊບູໂລນ" ແປວ່າຫຍັງ?* *"ເນັບທາລີ" ເດ?*
*ເປັນຈັ່ງໃດ ຈຶ່ງເວົ້າວ່າ "ຄາລີເລບ່ອນຊາວຕ່າງປະເທດອາໄສຢູ່" ຊາວຢິວບໍ່ຢູ່ບໍ? ເພື່ອຈະໃຫ້ເຂົ້າໃຈດີເຮົາຈະຮຽນພະຄຳພີເດີມອີກໜ້ອຍນຶ່ງ*

**22** ແມ່ນໂດຍເຫດໃດທີ່ເພິ່ນເວົ້າເຖິງ "ເຊບູໂລນ" ແລະ "ເນັບທາລີ" ເນາະ! ເຮົາຈະຕ້ອງກັບໄປຮຽນເຖິງ ອັບລາ ຮາມ ເພິ່ນມີລູກແລະຫຼານຂອງເພິ່ນມີຊື່ວ່າ ຢາໂຄບແຕ່ວ່າ ພະເຈົ້າ ປ່ຽນຊື່ໃໝ່ວ່າ "ອິສະລາເອນ" ພວກ ເຂົາເຫຼົ່ານີ້ຢູ່ກ່ອນ ພະເຢຊູປະມານຈັກພັນປີ? ____________

**23** ທ່ານ ອິສະລາເອນ ມີລູກ 12 ຄົນ ເຊິ່ງຕໍ່ໄປຊາດອິສະລາເອນໄດ້ແບ່ງເປັນ 12 ຕະກຸນຕາມເຊື້ອສາຍ 12 ຄົນນັ້ນ. ພວກສິບສອງຄົນນັ້ນເປັນເຫຼນຂອງໃຜ? ____________________

**24** ບາດນີ້ຈົ່ງກັບໄປເບິ່ງ ມທ 2:5-6 ພວກປະໂລຫິດໃຫຍ່ມາບອກກະສັດ ເຮໂລດ ວ່າ ພະຄຼິດຈະເກີດໃນບ້ານເບດ ເລ ເຮັມແຂວງຢູດາ. ແຂວງນັ້ນຕິດຊື່ຄືຊື່ລູກຂອງທ່ານ ອິສະລາເອນຄົນໜຶ່ງທ່ານຄິດວ່າຈະເປັນຄົນໃດ? (ເລືອກ)

_______ ເຊບູໂລນ _______ ຢູດາ _______ ເນັບທາລີ

**25** 6 ແຂວງຂອງປາແລັດສະຕິນທີ່ເຮົາຮຽນມາໃນເຫຼັ້ມທີ 1 ນັ້ນປະກອບດ້ວຍດິນແດນຂອງ 12 ຕະກຸນນັ້ນ.

ກ. ແຂວງຄາລີເລປະກອບມາຈາກ ສອງ ຕະກຸນໃດ?____________ ແລະ ___________

ຂ. ໝາຍຄວາມວ່າດິນແດນນັ້ນເຄີຍເປັນຂອງຕະກຸນ ເຊບູໂລນ ກັບ ເນັບທາລີ ກາຍມາເປັນແຂວງໃດໃນສະໄໝພະເຢຊູເກີດ? ______________________________________

**26** ໃນລາຍຊື່ຕໍ່ໄປນີ້ ແມ່ນຄົນໃດເປັນສາວົກຂອງ ພະເຢຊູ? ໃຫ້ໝາຍເອົາຂໍ້ທີ່ຖືກ.

ກ. ເປໂຕ.

ຂ. ຢູດາ ລູກຂອງທ່ານ ອິສະລາເອນ.

ຄ. ອັນເດອາ.

ງ. ເນັບທາລີ.

ຈ. ໂຢຮັນ.

ສ. ຢາໂກໂບ.

ຊ. ເຊບູໂລນ.

**27** ດັ່ງນັ້ນຊື່ "ຢູດາ" "ເຊບູໂລນ" ແລະ "ເນັບທາລີ" ແມ່ນຊື່ພວກໃດ? __________________

**28** ແຕ່ຍັງມີປະການໜຶ່ງໃນຄຳທຳນວາຍຂອງເອຊາຢາ ທີ່ແກ້ໄຂບໍ່ຕົກເທື່ອ. ເອຊາຢາບອກວ່າ ແຂວງຄາລີເລນັ້ນ ເປັນບ່ອນຊາວຕ່າງປະເທດອາໄສຢູ່ແຕ່ໃນສະໄໝພະເຢຊູເຖິງວ່າຂຶ້ນທົວເມືອງຈັກກະພັດໂລມກໍ່ຕາມແຕ່ປະຊາຊົນໃນ ແຂວງນັ້ນເປັນຊາດຢິວ. ຖ້າດັ່ງນັ້ນແມ່ນດ້ວຍເຫດໃດຍັງຈະວ່າຄົນຕ່າງປະເທດອາໄສຢູ່! ໃຫ້ເຮົາກັບໄປເບິ່ງພະຄຳພີເດີມຕັ້ງແຕ່ທ່ານໄດ້ຮຽນເຊື້ອວົງຂອງ ພະຄຼິດ ໃນເຫຼັ້ມທີ 1 ນັ້ນ ທ່ານອາດຈະຈື່ໄດ້ວ່າຄົນຢິວຖືກຈັບໄປເປັນຊະເລີຍປະມານ 600 ປີ ກ່ອນ ພະເຢຊູ ເກີດແລະ ເອຊາຢາ ຢູ່ກ່ອນ ພະເຢຊູ 700 ປີ:

| | | | | | | | |
|---|---|---|---|---|---|---|---|
| *ເອຊາຢາ* | *ການເປັນ ຊະເລີຍ* | | | | | | *ພະເຢຊູ ເກີດ* |
| *700* | *600* | *500* | *400* | *300* | *200* | *100* | *0* |

*ກ່ອນ ຄ.ສ.*

ຕາມແບບສະແດງເທິງນັ້ນເອຊາຢາຢູ່ກ່ອນພວກຄົນຢິວຖືກຈັບໄປເປັນຊະເລີຍປະມານຈັກປີ?

________________________________________

**29** ໃນສະໄໝເວລານັ້ນມີສອງຈັກກະພັດໃຫຍ່ຄື:ບາບີໂລນທີ່ຈວນຈະສິ້ນຍຸກໃນເວລານັ້ນແລະອັດຊີເລຍ ທີ່ມີກຳລັງ ຫຼາຍຂຶ້ນ.ຈັກກະພັດທັງສອງນັ້ນເປັນທີ່ ພະເຈົ້າໃຊ້ມາຕີສອນພວກຢິວ. ພະເຈົ້າໃຊ້ສອງຈັກກະພັດຈັກກະພັດໃດມາຕີສອນອິສະລາເອນ? ____________________

**30** ໃນສະໄໝດຽວກັນນັ້ນ ຈັກກະພັດອັດຊີເລຍຈະເຂົ້າມາຕີໃນດິນແດນນັ້ນເຂົາຍຶດໄດ້ສ່ວນພາກເໜືອຂອງຕະ ກຸນເຊບູໂລນແລະເນັບທາລີ ແຕ່ວ່າເຂົາຕີມາບໍ່ເຖິງເຢລູຊາເລັມ. ເອຊາຢາຢູ່ໃນກຸງ ເຢລູຊາເລັມໃນເວລາພາກເໜືອຄື: ເຊບູໂລນແລະເນັບທາລີ ຢູ່ໃຕ້ການປົກຄອງຂອງຄົນຕ່າງປະເທດ.

ກ. ແມ່ນດ້ວຍເຫດໃດ ທີ່ ເອຊາຢາ ຈະວ່າ ແຂວງຄາລີເລເປັນບ່ອນຊາວຕ່າງປະເທດອາໄສຢູ່?

________________________________________

ຂ. ຄົນຕ່າງປະເທດປົກຄອງແມ່ນຈັກກະພັດໃດ? ____________________

**31** ກ. ເອຊາຢາ ຢູ່ໃນແຂວງຄາລີເລບໍ່? ________________ ຢູ່ໃສ? ________________

ຂ. "ຄວາມສະຫວ່າງ"ໝາຍເຖິງໃຜ? ____________________________

ຄ. ເອຊາຢາ ຢູ່ກ່ອນຕັ້ງຄຼິດຕະສັກກະຫຼາດປະມານຈັກປີ? ______________________

ງ. ຂໍ້ຄຳທຳນວາຍທີ່ຍົກເອົາໃນ ມທ 4:15-16 ຢູ່ໃນພະຄຳພີເດີມບົດໃດ ຂໍ້ໃດ? ________

**32** ໃນສາຍຕາຂອງພວກອິສະລາເອນໃນສະໄໝພະຄຳພີເດີມຄົງຈະເປັນໄປບໍ່ໄດ້ຈັກເທື່ອວ່າ ພະຄຼິດຈະປະກາດ ຈາກ ຄາລີເລ. ແມ່ນເພາະເຫດໃດທີ່ຄົນໃນສະໄໝເອຊາຢາຈະເຊື່ອຄຳທຳນວາຍນີ້ຍາກ? ____________________________________

**33** ເຖິງວ່າພະເຢຊູ ປ່າວປະກາດໃນແຂວງຄາລີເລເປັນຕົ້ນແຕ່ວ່າພະອົງຍັງມີຊື່ສຽງດີອອກໄປໃນທີ່ອື່ນ ໆ ດ້ວຍ. ມ ທ 4:24-25 ບອກວ່າ ກິດຕິສັບຂອງພະອົງຊ່າລືໄປຫຼາຍທີ່.

ກ. ແມ່ນບ່ອນໃດທີ່ເປັນປະເທດໜຶ່ງຕ່າງຫາກ? __________________________

ຂ. ແມ່ນກຸງໃດທີ່ ເອຊາຢາ ຢູ່? ________________________________________

**34** ແຜນທີ່ໃນ ພະຄຳພີ ທ່ານອາດຈະເຫັນໄດ້ດິນແດນຂອງແຕ່ລະ 12 ຕະກຸນ

ກ. ຂໍໃຫ້ທ່ານຊອກຫາເຂດແດນຂອງຕະກຸນເຊບູໂລນແລະ ເນັບທາລີ. ໃນສະໄໝ ພະເຢຊູເຂດນັ້ນຂຶ້ນກັບ ແຂວງໃດ? ________________________________________

ຂ. ໃຫ້ເບິ່ງແຜນທີ່ໃນພະຄຳພີດ້ວຍ. ແມ່ນປະເທດໃດທີ່ຢູ່ທິດຕາເວັນອອກສຽງເໜືອ(ກາຍນ້ຳຄາລີເລໄປອີກ)? ________________________________________

(ປະເທດ ຊີເລຍ ເປັນປະເທດໜຶ່ງໃນຈັກກະພັດ ອັດຊີເລຍ)

**35** ໃຫ້ອ່ານ ມທ 4:24-25 ອີກເທື່ອໜຶ່ງແລ້ວ ໃຫ້ໝາຍເອົາຂໍ້ໃດທີ່ຖືກ.

ກ. "ຄວາມສະຫວ່າງ" ທີ່ເອຊາຢາທຳນວາຍນັ້ນໄປບໍ່ຮອດແຂວງຄາລີເລຈັກເທື່ອເພາະຈັກກະພັດອັດຊີເລຍປົກ ຄອງ ຕະຫຼອດ.

ຂ. "ຄວາມສະຫວ່າງ" ນັ້ນສ່ອງແສງໄປຕະຫຼອດທົ່ວແຂວງຄາລີເລ.

ຄ. "ຄວາມສະຫວ່າງ" ນັ້ນສ່ອງໄປເຖິງປະເທດແລະແຂວງອື່ນໆດ້ວຍ.

ງ. ກຸງເຢລູຊາເລັມເຊິ່ງເປັນທີ່ຢູ່ຂອງຜູ້ທຳນວາຍ ເອຊາຢາ ກໍ່ໄດ້ຮັບ "ຄວາມສະຫວ່າງ" ນັ້ນ.

**36** ຂໍໃຫ້ທ່ານຂຽນມາວ່າ ແມ່ນເພາະເຫດໃດທີ່ ພະເຢຊູ ປະກາດໃນແຂວງຄາລີເລສ່ວນຫຼາຍ?

________________________________________

________________________________________

________________________________________

*ກ່ອນທ່ານຈະໄປປະຊຸມເທື່ອໜ້າໃຫ້ທ່ານຮັບພິຈາລະນາຄຳເວົ້າຕໍ່ໄປນີ້ ເພື່ອຈະປຶກສາຫາລືກັບໝູ່ໃນປະຊຸມ. ພະເຢຊູມີວິທີໃນການປ່າວປະກາດທີ່ປະກອບດ້ວຍ 4 ປະການດັ່ງຕໍ່ໄປນີ້ຄື:*

*1. ພະທຳທີ່ຈະປະກາດ.*

*2. ສູນກາງທີ່ຈະປະກາດ.*

*3. ການໃຊ້ອັກຄະສາວົກ.*

*4. ເຄື່ອງອາວຸດສອງປະການ.*

*ວິທີການຂອງພະເຢຊູນັ້ນຈະເອົາມາໃຊ້ເປັນຕົວຢ່າງໃນວຽກການງານຂອງພະເຈົ້າທຸກວັນນີ້ໄດ້ບໍ່? ທ່ານຈະປະຕິບັດຕາມໃນການປ່າວປະກາດຂອງທ່ານເອງໄດ້ບໍ່?*

*ຢ່າລືມບົດເສັງ!*

**ຄຳຕອບ:**

**1** *ກ. ມັດທາຍ 4:12-25 ຂ. ບົດ 5-7 ຄ. ບົດ 8-9 ງ. ບົດ 10*
*ຈ. ບົດ 11-12 ສ. ບົດ 13*

**2** *ການຂະຫຍາຍໄປຂອງອານາຈັກ. ພະເຢຊູ ຊົງຕັ້ງຕົນປ່າວປະກາດໃນແຂວງ ຄາລີເລ. ບົດ 4:12-25*

**3** *5 ເທື່ອ "ຄາລີເລ"*

**4** *1. ຄ 2.ກ 3.ຈ 4.ຊ 5.ຂ 6.ງ 7.ສ 8.ຍ*

**5** *ຂ. ຄ. ຈ. ສ. ຊ. ດ. ຖ. ຖືກ.*

**6** *ກ. ລາຊະອານາຈັກສະຫວັນ. ຂ. ໂຮງທຳມະເທດສະ ໜາ.*

**7** *ຖືກຈັບໄວ້ແລ້ວ.*

**8** *ເມືອງກາເປນາອູມ.*

**9** *ກ. ມີຫີນທາງຜ່ານສະດວກ. ຂ. ມີຫຼາຍ. ຄ. ຍາວ 100 ຫຼັກ ກວ້າງ 50 ຫຼັກ*
*ງ. ເຂາບະເລໝາກໄມ້ປາ*

**10** *ກ. ແລະ ງ.ຖືກ.*

**11** *ຂ. ຖືກ.*

**12** *ສັ່ງສອນແລະໃຫ້ຄົນເຈັບປ່ວຍ ໃຫ້ຫາຍດີ ຫຼືເຮັດການອັດສະຈັນ*

**13** *ສັ່ງສອນ ແລະ ເຮັດການອັດສະຈັນ*

**14** *ເອີ້ນເອົາ 4 ຄົນ.*

**15** *ຄ. ຖືກ.*

**16** *ເປໂຕ ອັນເດອາ ຢາໂກໂບ ໂຢຮັນ*

**17** *ກ. ຢູ່ແຄມແມ່ນ້ຳຢໍດາເນ ກັບ ໂຢຮັນບັບຕິສະໂຕ ຂ. ສະໄ ໝປີທີ່ຕຽມຕົວ.*
*ຄ. ເຂົາຕາມພະອົງໄປ.*

**18** *ກ. ສັ່ງສອນ ແລະ ເຮັດການອັດສະຈັນ. ຂ. ສາວົກ.*

**19** *ກ. ເອຊາຢາ. ຂ. ຄວາມສະຫວ່າງ.*

**20** *ເອຊາຢາ 9:1-2*

**21** *ຂ. ຄ. ຈ. ແລະ ສ. ຖືກ.*

**22** *2000 ປີ*

**23** *ອັບລາຮາມ.*

**24** *ຢູດາ*

**25** *ກ. ເຊບູໂລນ ແລະ ເນັບທາລີ. ຂ. ຄາລີເລ.*

**26** *ກ. ຄ. ຈ.ແລະ ສ.ຖືກ.*

**27** *ເປັນລູກຂອງທ່ານອິສະລາເອນ (ຫຼືເປັນຕະກຸນອິສະລາເອນກໍ່ໄດ້)*

**ຄຳຕອບ (ຕໍ່):**

**28** *100 ປີ.*

**29** *ບາບີໂລນ ແລະ ອັດຊີເລຍ.*

**30** *ກ. ເພາະອຳນາດການເມືອງບໍ່ຢູ່ກັບ ຊາວຢິວໃນເວລານັ້ນ. ຂ.ຈັກກະພັດ ອັດຊີເລຍ.*

**31** *ກ. ບໍ່ໄດ້ຢູ່ໃນແຂວງຄາລີເລ. ຢູ່ກຸງເຢລູຊາເລັມ. ຂ. ພະເຢຊູ ຄຼິດ*
*ຄ. 700 ປີກ່ອນຕັ້ງ ຄ.ສ. ງ. ເອຊາຢາ 9:1-2*

**32** *ເພາະໃນເວລານັ້ນບໍ່ແມ່ນດິນແດນຄົນຢິວ (ຫຼືຄຳຄ້າຍຄືກັນກໍ່ໄດ້)*

**33** *ກ. ຊີເລຍ. ຂ. ກຸງເຢລູຊາເລັມ.*

**34** *ກ. ຄາລີເລ. ຂ. ຊີເລຍ.*

**35** *ຂ. ຄ .ແລະ ງ. ຖືກ.*

**36** *ອາດຈະມີເຫດອື່ນໆດ້ວຍ ແຕ່ວ່າເຫດສຳຄັນອັນ ໜຶ່ງແມ່ນເພື່ອໃຫ້ຄຳທຳນວາຍຂອງເອຊາຢາສຳເລັດ.*